# ຄວາມສາມາດໃນການຈັດຕັ້ງປະຕິບັດຫຼັກສູດການຮຽນ-ການສອນໃນຊັ້ນປະຖົມສຶກສາ ທີ່ ເມືອງ ບາຈຽງຈະເລີນສຸກ ແຂວງຈຳປາສັກ

*ຄຳສະເຫວີຍ ສິດສິງຄາມ[1], ພອນສະຫວັນ ເທບພະສຸລິທອນ[2], ບຸນສິງ ສໍແກ້ວມະນີ[3], ທິບພະວັນ ຂັນທະພອນ[4]*

*ຄະນະສຶກສາສາດ ສາຂາວິຊາວິທະຍາສາດການສຶກສາ ມະຫາວິທະຍາໄລ ຈຳປາສັກ.*

## ບົດຄັດຫຍໍ້

ຂີດຄວາມສາມາດໃນການຈັດຕັ້ງປະຕິບັດຫຼັກສູດການຮຽນ-ການສອນໃນຊັ້ນປະຖົມສຶກສາ ທີ່ ເມືອງບາຈຽງຈະເລີນສຸກ ແຂວງຈຳປາສັກ ຖືວ່າເປັນບັນຫາສຳຄັນທີ່ທາງຜູ້ບໍລິຫານການສຶກສາໃນທ້ອງຖິ່ນດັ່ງກ່າວ ແມ່ນຍັງຕ້ອງໄດ້ສືບຕໍ່ ປັບປຸງແກ້ໄຂໃຫ້ດີຂຶ້ນເລື້ອຍໆ ໃນແຕ່ລະໄລຍະການປ່ຽນແປງຂອງສັງຄົມ, ສຳລັບການສຶກສາຄັ້ງນີ້ແມ່ນມີຈຸປະສົງເພື່ອສຶກສາສະພາບການຈັດຕັ້ງປະຕິບັດຫຼັກສູດການຮຽນ-ການສອນ ທີ່ໂຮງຮຽນປະຖົມສຶກສາພາຍໃນເມືອງ ບາຈຽງຈະເລີນສຸກ ແຂວງ ຈຳປາສັກ, ເພື່ອປຽບທຽບຄວາມຄິດເຫັນຂອງຄະນະຜູ້ອຳນວຍການ ແລະ ຄູສອນຕໍ່ກັບຄວາມສາມາດໃນການຈັດຕັ້ງປະຕິບັດຫຼັກສູດການຮຽນ-ການສອນ ທີ່ສົ່ງຜົນຕໍ່ການຮຽນຂອງນັກຮຽນ ໃນຊັ້ນປະຖົມສຶກສາ ໂດຍການຈຳແນກຕາມ ຂະໜາດຂອງໂຮງຮຽນ, ປະສົບການເຮັດວຽກ ແລະ ໜ້າທີ່ຮັບຜິດຊອບ ແລະ ສຶກສາຄວາມຄິດເຫັນຂອງຄະນະຜູ້ອຳນວຍການ ແລະ ຄູສອນຊັ້ນປະຖົມສຶກສາຕໍ່ແນວທາງປັບປຸງແກ້ໄຂບັນ ຫາໃນການຈັດຕັ້ງການຮຽນ-ການສອນໃຫ້ດີຂຶ້ນໃນອະນາຄົດ. ການສຶກສາຄັ້ງນີ້ເປັນການສຶກສາແບບປະລິມານ ໂດຍຮູບແບບການສຳຫຼວດ (Survey Research). ປະຊາກອນທີ່ໃຊ້ໃນການວິໄຈຄັ້ງນີ້ໄດ້ແກ່ ບຸກຄະລາກອນໃນໂຮງຮຽນປະຖົມສຶກສາ, ເມືອງບາຈຽງຈະເລີນສຸກ, ແຂວງຈຳປາສັກ ໃນສົກຮຽນ 2022 – 2023, ຈຳແນກເປັນຜູ້ອຳນວຍການຈຳນວນ 48 ຄົນ, ຄູສອນຈຳນວນ 189 ຄົນ, ລວມທັງໝົດ 237 ຄົນ ເຊິ່ງໄດ້ກຳນົດກຸ່ມຕົວຢ່າງໂດຍໃຊ້ຕາຕະລາງຂອງ Taro Yamane ອ້າງເຖິງໃນ (ພັດທຣາພອນ ເກດສັງ 2005:75) ໄດ້ມາຈາກການສຸ່ມຕົວຢ່າງແບບແບ່ງຊັ້ນ ( Stratified Random Sampling). ໂດຍໃຊ້ຂະໜາດຂອງໂຮງຮຽນ ແລະ ຕຳແໜ່ງເປັນຊັ້ນ ເຊິ່ງໄດ້ກຸ່ມຕົວຢ່າງທັງໝົດແມ່ນ 150 ຄົນ ໃນນັ້ນມີ ຜູ້ອຳນວຍການ 48 ຄົນ ແລະ ຄູສອນ 102 ຄົນ. ເຄື່ອງມືທີ່ໃຊ້ໃນການເກັບຮວບຮວມຂໍ້ມູນການວິໄຈຄັ້ງນີ້ ເປັນແບບສອບຖາມ (Questionnaire) ເຊິ່ງແບບສອບຖາມດັ່ງກ່າວນັກຄົ້ນຄວ້າໄດ້ທົບທວນເອກະສານທີ່ກ່ຽວຂ້ອງປະສົມປະສານ ໂດຍພັດທະນາເຄື່ອງມືຈາກແບບຂອງທ່ານ **Hallinger (2011).** ນຳເຄື່ອງມືໄປທົດລອງໃຊ້ (Pilot) ກັບປະຊາກອນທີ່ບໍ່ແມ່ນກຸ່ມຕົວຢ່າງຈຳນວນ 30 ຄົນ ເພື່ອຫາຄຸນນະພາບເຄື່ອງມື ( Cronbach Alpha Reliability ) ຜົນການວິເຄາະພົບວ່າ: 0.74 ຂຶ້ນໄປ. ສຳລັບການປະມວນຜົນຂໍ້ມູນ ໂດຍໃຊ້ໂປຣແກຣມ ສຳເລັດຮູບ SPSS ເຊິ່ງວິເຄາະຄ່າຄວາມຖີ່, ຫາຄ່າເປີເຊັນ (%), ຄ່າສະເລ່ຍ ($\bar{X}$), ຄ່າຜັນປ່ຽນມາດຕະຖານ (S.D), ໃຊ້ສະຖິຕິ (t-test Independent) ແລະ f-test ເພື່ອປຽບທຽບຄວາມຄິດເຫັນຂອງກຸ່ມຕົວຢ່າງ. ຜົນການສຶກສາພົບວ່າ: ສະພາບການຈັດຕັ້ງການຮຽນ-ການສອນ ໃນຊັ້ນປະຖົມ ພາຍໃນເມືອງ ບາຈຽງຈະເລີນສຸກ ແຂວງ ຈຳປາສັກ ມີຈຳນວນຊົ່ວໂມງສອນສ່ວນໃຫຍ່ຂອງກຸ່ມຕົວຢ່າງແມ່ນ 20

---

*[1] ນັກສຶກສາປະລິນຍາໂທ ສາຂາ ວິທະຍາສາດການສຶກສາຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ*

*[2] ສຳນັກງານອະທິການບໍດີ ມະຫາວິທະຍາໄລ ຈຳປາສັກ*

*[3] ຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ*

*[4] ຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ*

ຊົ່ວໂມງຂຶ້ນໄປ, ການສອນພິເສດບຳລຸງ ເພື່ອສົ່ງເສີມຄວາມຮູ້ໃຫ້ແກ່ນັກຮຽນ ແມ່ນ ໄດ້ປະຕິບັດບາງຄັ້ງຄາວ, ການປະຕິບັດຕົວຈິງແມ່ນປະຕິບັດຕົວຈິງຫຼາຍ, ຫ້ອງຮຽນ ແລະ ອຸປະກອນຮັບໃຊ້ການຮຽນ-ການສອນ ສ່ວນໃຫຍ່ຂອງກຸ່ມຕົວຢ່າງແມ່ນບໍ່ພຽງພໍ, ສະພາບແວດລ້ອມໂຮງຮຽນມີຄວາມເໝາະສົມ ຢູ່ໃນລະດັບປານກາງ ຄູ-ອາຈານທີ່ສອນໃນຊັ້ນປະຖົມສຶກສາແມ່ນສອນລວມທຸກວິຊາຄື: ວິຊາພາສາລາວ, ວິຊາຄະນິດສາດ, ວິຊາໂລກອ້ອມຕົວ, ຕີລາຄາຜົນສຳເລັດແມ່ນຢູ່ໃນລະດັບປານກາງ, ກິດຈະກຳສົ່ງເສີມການຮຽນຮູ້ ແມ່ນມີຢູ່ໃນລະດັບປານກາງ, ການປະຕິບັດ 3 ລັກສະນະ 5 ຫຼັກມູນຂອງການສຶກສາ ແມ່ນປະຕິບັດໄດ້ຫຼາຍ, ສຳລັບຕໍ່ກັບການນຳໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານແມ່ນ ໃຊ້ປານກາງ ແລະ ສຳລັບບັນຫາທີ່ທ້າທາຍໃນການປະຕິບັດຫຼັກສູດການຮຽນ-ການສອນ ສ່ວນໃຫຍ່ຂອງກຸ່ມຕົວຢ່າງແມ່ນ ດ້ານງົບປະມານ, ຮອງລົງມາແມ່ນດ້ານອຸປະກອນ ແລະ ພື້ນຖານໂຄງລ່າງ ແລະ ດ້ານນັກຮຽນ ສ່ວນດ້ານຄູສອນ ແມ່ນບໍ່ມີບັນຫາຫຼາຍ.

**ຄຳສັບສຳຄັນ:** ຄວາມສາມາດ, ການປະຕິບັດຫຼັກສູດ, ຜູ້ອຳນວຍການ, ຄູສອນ ແລະ ໂຮງຮຽນປະຖົມສຶກສາ.

# The ability to implement the teaching-learning curriculum in the primary education in Ba Chiang Charoen Suk District, Champasak Province

**Abstract**

Curriculum Instruction capacities implementation in Bachiengchalernsouk District, Champasak Province is the most important issue that the local educational administrators have been concerning and contunueing to find out the better strategies for improving specific issues of the period of times. This study aimed to study the situations of instructional curriculaum implementation at primary schools in Bachiengchalernsouk District, Champasak province, to compare the principals and teachers' perception towards the instructional capacity to influent students' academic performance in Bachiengchalernsouk district by schools' size, participants' experiences and their responsibilities. And to study the participants'attitudes towards the ways for resolving the issues of learning and teaching. The study was quantitative research and The participants of this study were principals and teachers in Primary schools in Bachiengchalernsouk in acedmic year 2022-2023 including 48 pricipals and 189 teachers by Taro Yamane and Stratified Random Sampling techniques. The research' instrument was perception-questionnaire that developed from Hallinger (2011). The pilot study with 30 target groups in order to examine the Cronbach Alpha Reliability as result was 0.74 up. Statistic analysis was applied SPSS program to analyse percentage (%), Means ($\bar{X}$), standard Diviation (S.D), t-test Independent and f-test. The results of the study were found that the situations of instruction in Primary schools in Bachienglernsouk District, Champasak Province , majority of teachers had class about 20 hours per week, tutor class was sometimes conducted, real practicum was higher, lacked of classrooms and material supports, the school environment was medium sutability, almost of teachers teaches all of subjects, the challenge of instruction was students factor, follo academic performance achievement was medium level, technology usage for instruction was medium level, the main challenge was financial factor, wed up infranstructure and facilities supports, students, teachers and relevance.

**Key words:** Ability, curriculum implementation, principals, teachers and primary schools.

**1. ພາກສະເໜີ**

ການສຶກສາເປັນຂໍກຸນແຈສູ່ຄວາມສໍາເລັດ, ເພາະວ່າການສຶກສາ ເປັນຂະບວນການພັດທະນາຄຸນນະພາບຊີວິດ ຂອງມວນມະນຸດ ໃຫ້ດໍາລົງຊີວິດໄດ້ຢ່າງມີຄຸນນະພາບ ພ້ອມທັງເປັນກໍາລັງແຮງໃນການພັດທະນາປະເທດຊາດ ໃຫ້ມີຄວາມຈະເລີນຮຸ່ງເຮືອງ ທັງດ້ານເສດຖະກິດ, ສັງຄົມ, ການເມືອງ, ວັດທະນະທໍາ ແລະ ເທັກໂນໂລຢີ, ດັ່ງນັ້ນ, ໃນການຈັດການສຶກສາຕ້ອງເນັ້ນໜັກໃນການພັດທະນາຄົນໃຫ້ມີຄວາມສົມບູນແບບທັງທາງກາຍ ແລະ ທາງຈິດໃຈ, ສະຕິປັນຍາ, ຄວາມຮູ້ຄວາມສາມາດ ແລະ ມີຄຸນນະທໍາ ເພື່ອໃຫ້ແທດເໝາະກັບຄວາມຕ້ອງການ ແລະ ເງື່ອນໄຂການພັດທະນາໃນຫຼາຍໆດ້ານຂອງປະເທດ, ນອກນີ້ກໍ່ຄວນຈະຕ້ອງມີການປັບປຸງຂະບວນການຮຽນ-ການສອນໂດຍການນໍາໃຊ້ເທັກນິກການສອນແບບໃໝ່ ແບບເອົານັກຮຽນເປັນໃຈກາງ ເນັ້ນການໃຫ້ຜູ້ຮຽນ ( ນັກຮຽນ ) ໄດ້ປະຕິບັດຕົວຈິງ ເຊິ່ງມັນສາມາດເຮັດໃຫ້ເຂົາເຈົ້າເກີດມີຫົວຄິດປະດິດສ້າງ ແລະ ສາມາດແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນໄດ້ດ້ວຍຕົນເອງ. ນັບຕັ້ງແຕ່ປີ 1993 ເປັນຕົ້ນມາການສຶກສາລະບົບສາມັນ ມີການຂະຫຍາຍຕົວຢ່າງໄວວາທັງທາງດ້ານປະລິມານ ແລະ ຄຸນນະພາບ. ພ້ອມທັງມີການນໍາໃຊ້ຫຼັກສູດ ແລະ ວິທີການສອນແບບໃໝ່ເຂົ້າມາໃຊ້ ເຊິ່ງເຮັດໃຫ້ການຮຽນ-ການສອນມີຄວາມກ້າວໜ້າຂຶ້ນ, ນອກນີ້ມັນຈໍາເປັນຕ້ອງມີການພັດທະນາບຸກຄະລາກອນ ຫຼື ຄູທີ່ມີຢູ່ໃນໂຮງຮຽນໃຫ້ມີຄວາມສາມາດ ໃນການຈັດການຮຽນ-ການສອນແບບໃໝ່ໃຫ້ມີຄວາມພ້ອມ ແລະ ມີປະສິດທິພາບ.

ພັດທະນາຊັບພະຍາກອນມະນຸດຢ່າງແຂງແຮງ, ສ້າງສັງຄົມທີ່ປະຊາຊົນເປັນເຈົ້າ ມີປະຊາທິປະໄຕ ສະ ເໝີພາບ ແລະ ຍຸດຕິທໍາ, ສຸມໃສ່ພັດທະນາຊັບພະຍາກອນມະນຸດຢ່າງແຂງແຮງ, ໃນເງື່ອນໄຂໃໝ່ຂອງການພັດທະນາ ຕ້ອງສ້າງຄົນລາວ ໃຫ້ມີຄວາມພ້ອມໃນທຸກດ້ານ, ສາມາດກາຍເປັນກໍາລັງຂັບດັນຕົ້ນຕໍໃຫ້ແກ່ການປົກປັກຮັກສາ ແລະ ພັດທະນາປະເທດຊາດ, ຮັບປະກັນໃຫ້ຄົນລາວມີລະດັບການສຶກສາຂັ້ນພື້ນຖານທີ່ມີຄຸນນະພາບ, ພັດທະນາດ້ານອາຊີບ ແລະ ມີສີມືການອອກແຮງງານຢ່າງບໍ່ຢຸດຢັ້ງ, ສາມາດຄົ້ນຄວ້າປະດິດສ້າງ ແລະ ເປັນເຈົ້າການນໍາໃຊ້ວິທະຍາສາດ-ເຕັກໂນໂລຢີທີ່ທັນສະໄໝ ໂດຍສະເພາະແມ່ນໃນດ້ານເຕັກໂນໂລຢີຂ່າວສານ ແລະ ການສື່ສານໃຫ້ທຽບທັນກັບຄຸນນະພາບຂອງແຮງງານ ແລະ ບຸກຄະລາກອນ ຂອງບັນດາປະເທດໃນອະນຸພາກພື້ນ,ເອົາໃຈໃສ່ສົມທົບລະຫວ່າງ ສະຖາບັນການສຶກສາ, ອົງກອນສັງຄົມ ແລະ ຄອບຄົວ ເພື່ອເຮັດໃຫ້ການຮຽນຮູ້ສາຂາວິຊາຕ່າງໆ ຄຽງຄູ່ກັບການພັດທະນາຄຸນຄ່າວັດທະນະທໍາຂອງຊາດ, ຮຽນຮູ້ມູນເຊື້ອຄວາມສາມັກຄີປອງດອງ, ມີສະຕິຮັກຊາດ ແລະ ເສຍສະຫຼະເພື່ອຜົນປະໂຫຍດສ່ວນລວມ, ປູກຈິດສໍານຶກ ແລະ ຄວາມຮັບຜິດຊອບຕໍ່ສັງຄົມ ສ້າງສະຕິເຄົາລົບກົດໝາຍ, ຕື່ນຕົວປະຕິບັດພັນທະພົນລະເມືອງ ແລະ ມີຈັນຍາບັນໃນການປະຕິບັດໜ້າທີ່ເພື່ອສັງຄົມຂອງຄົນລາວ; ສ້າງທຸກເງື່ອນໄຂ ແລະ ໂອກາດໃຫ້ຄົນລາວທຸກຄົນ ໄດ້ຮັບການພັດທະນາຮ່ວມກັນ ທັງສາມາດຊົມໃຊ້ໝາກຜົນຂອງການພັດທະນາຢ່າງຍຸດຕິທໍາ (ຄະນະຈັດຕັ້ງສູນກາງພັກ, ມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ, 2021).

ຈາກສະພາບບັນຫາ ທາງໃນຫຼາຍດ້ານທີ່ສົ່ງຜົນກະທົບຕໍ່ຂີດຄວາມສາມາດໃນການບໍລິຫານຈັດການພາຍໃນໂຮງຮຽນ ໂດຍສະເພາະໂຮງຮຽນປະຖົມສຶກສາ ເຊິ່ງຍັງເຫັນວ່າຍັງມີບາງບັນຫາທີ່ຍັງບໍ່ສອດຄ່ອງກັບສະພາບຄວາມເປັນຈິງ ແລະ ຄວາມຕ້ອງການຂອງທ້ອງຖິ່ນ ເປັນຜົນເຮັດໃຫ້ຂາດການລະດົມກໍາລັງຊັບພະຍາກອນຈາກປະຊາຊົນໃນທ້ອງຖິ່ນ ເພື່ອເຂົ້າມາມີສ່ວນຮ່ວມໃນການຈັດການສຶກສາ, ນອກນີ້ຍັງມີບຸກ

ຄະລາກອນທາງການສຶກສາ ທີ່ຍັງບໍ່ທັນມີຄວາມສາມາດພຽງພໍໃນການປະຕິບັດງານ ເຊິ່ງເປັນຜົນໃຫ້ການຈັດການສຶກສາບໍ່ມີຄຸນນະພາບ ເມື່ອກ່າວມາເຖິງສະພາບ ແລະ ບັນຫາເຊັ່ນ ດ້ານວິຊາການມີບາງໂຮງຮຽນມີຜົນສຳເລັດທາງການຈັດການຮຽນ-ການສອນຍັງຢູ່ໃນລະດັບຕ່ຳ, ນັກຮຽນບໍ່ຈົບການສຶກສາໃນເກນອາຍຸທີ່ກຳນົດ, ຂາດການເອົາໃຈໃສ່ຕິດຕາມຜົນການຮຽນຂອງຕົນ, ຜູ້ອຳນວຍການໂຮງຮຽນປະຖົມສາມັນສຶກສາຈຳນວນໜຶ່ງ ຍັງບໍ່ທັນເອົາໃຈໃສ່ເທົ່າທີ່ຄວນກ່ຽວກັບຄວາມເປັນເຈົ້າການໃນການບໍລິຫານງານວິຊາການ, ການບໍລິຫານງານຍັງບໍ່ທັນສອດຄ່ອງກັບ 7 ໜ້າວຽກຂອງຜູ້ອຳນວຍການໂຮງຮຽນປະຖົມສາມັນສຶກສາ, ຈຶ່ງເປັນສາເຫດເຮັດໃຫ້ບັນຫາຄຸນນະພາບການຮຽນ-ການສອນຕ່ຳ ເຊິ່ງມັນສະແດງອອກໃນຜົນການສອບເສັງຈົບຊັ້ນປ.5 ໄດ້ຄະແນນ 5 ຂຶ້ນໄປທຸກໆວິຊາແມ່ນມີຈຳນວນໜ້ອຍ, ນັກຮຽນທີ່ຈົບປ.5 ແລ້ວເລື່ອນຊັ້ນຂຶ້ນມ.1 ຍັງອ່ານ ແລະ ຂຽນ ພາສາລາວບໍ່ທັນໄດ້ດີ, ການຈັດຕັ້ງປະຕິບັດ 15 ຄາດໝາຍທີ່ສະພາຮັບຮອງສາມາດບັນລຸໄດ້ພຽງແຕ່ 5 ຄາດໝາຍເທົ່ານັ້ນ, ເຊິ່ງວ່າບັນຫາເຫຼົ່ານີ້ມີຜົນຕໍ່ກັບການບໍລິຫານງານວິຊາການຂອງຜູ້ອຳນວຍໂຮງຮຽນ ແລະ ຄູສອນໃນຊັ້ນປະຖົມສາມັນສຶກສາ ເມືອງບາຈຽງຈະເລີນສຸກ ແຂວງ ຈຳປາສັກ (ຫ້ອງການສຶກສາທິການ ແລະ ກິລາ ເມືອງບາຈຽງຈະເລີນສຸກ, 2022). ເພາະສະນັ້ນ, ຕໍ່ກັບບັນຫາທີ່ເກີດຂຶ້ນ ແລະ ຕໍ່ກັບຄວາມສຳຄັນຂອງບັນຫາຂ້າງເທິງນັ້ນ ຜູ້ຄົ້ນຄວ້າຈຶ່ງມີຄວາມສົນໃຈຢາກຄົ້ນຄວ້າໃນຫົວຂໍ້ "**ຄວາມສາມາດໃນການຈັດຕັ້ງປະຕິບັດຫຼັກສູດການຮຽນ-ການສອນໃນຊັ້ນປະຖົມສຶກສາ ທີ່ ເມືອງບາຈຽງຈະເລີນສຸກ ແຂວງຈຳປາສັກ**" ຕາມຄວາມຄິດເຫັນຂອງຄະນະອຳນວຍການ ແລະ ຄູສອນ ຢູ່ໂຮງຮຽນປະຖົມສາມັນສຶກສາ ໃນທົ່ວເມືອງບາຈຽງຈະເລີນສຸກ, ແຂວງ ຈຳປາສັກ, ເພື່ອຊອກຫາແນວທາງມາປັບປຸງ, ແກ້ໄຂ ແລະ ພັດທະນາການສຶກສາ ເຮັດໃຫ້ຄຸນນະພາບການສຶກສາໃນຊັ້ນປະຖົມສາມັນສຶກສາເມືອງບາຈຽງຈະເລີນສຸກດີຂຶ້ນເລື້ອຍໆ.

**2. ຄຳຖາມຄົ້ນຄວ້າ**

1) ສະພາບການຈັດຕັ້ງປະຕິບັດຫຼັກສູດການຮຽນ-ການສອນ ທີ່ ໂຮງຮຽນປະຖົມສຶກສາ ພາຍໃນເມືອງ ບາຈຽງຈະເລີນສຸກ ເປັນແນວໃດ ?
2) ການປຽບທຽບຄວາມຄິດເຫັນຂອງຜູ້ອຳນວຍການ ແລະ ຄູສອນ ຕໍ່ຄວາມສາມາດໃນການຈັດຕັ້ງປະຕິບັດຫຼັກສູດການຮຽນ-ການສອນ ໂດຍການຈຳແນກຕາມ ຂະໜາດຂອງໂຮງຮຽນ, ປະສົບການເຮັດວຽກ ແລະ ໜ້າທີ່ຮັບຜິດຊອບ ເປັນແນວໃດ ?
3) ຄວາມຄິດເຫັນຂອງຜູ້ອຳນວຍການ ແລະ ຄູສອນຕໍ່ແນວທາງປັບປຸງແກ້ໄຂບັນຫາການໃນການຈັດຕັ້ງປະຕິບັດຫຼັກສູດການຮຽນ-ການສອນ ໃຫ້ດີຂຶ້ນໃນອະນາຄົດຈະເປັນໄປໃນທິດທາງໃດ ?

**3. ຈຸດປະສົງຂອງການວິໄຈ**

1) ເພື່ອສຶກສາສະພາບການຈັດຕັ້ງປະຕິບັດຫຼັກສູດການຮຽນ-ການສອນ ທີ່ໂຮງຮຽນປະຖົມສຶກສາ ພາຍໃນເມືອງ ບາຈຽງຈະເລີນສຸກ ແຂວງ ຈຳປາສັກ.
2) ເພື່ອປຽບທຽບຄວາມຄິດເຫັນຂອງຄະນະຜູ້ອຳນວຍການ ແລະ ຄູສອນຕໍ່ກັບຄວາມສາມາດໃນການຈັດຕັ້ງ
ປະຕິບັດຫຼັກສູດການຮຽນ-ການສອນ ທີ່ສົ່ງຜົນຕໍ່ການຮຽນຂອງນັກຮຽນ ໃນຊັ້ນປະຖົມສຶກສາ ໂດຍການຈຳແນກຕາມ ຂະໜາດຂອງໂຮງຮຽນ, ປະສົບການເຮັດວຽກ ແລະ ໜ້າທີ່ຮັບຜິດຊອບ.

3) ສຶກສາຄວາມຄິດເຫັນຂອງຄະນະຜູ້ອຳນວຍການ ແລະ ຄູສອນຊັ້ນປະຖົມສຶກສາຕໍ່ແນວທາງປັບປຸງແກ້ໄຂບັນຫາໃນການຈັດຕັ້ງການຮຽນ-ການສອນໃຫ້ດີຂຶ້ນໃນອະນາຄົດ.

**4. ວິທີການຄົ້ນຄວ້າ**

ການສຶກສາຄັ້ງນີ້ແມ່ນເພື່ອສຶກສາສະພາບ ແລະ ປຽບທຽບຄວາມຄິດເຫັນຂອງຄະນະອຳນວຍການ ແລະ ຄູສອນ ທີ່ມີຕໍ່ຂີດຄວາມສາມາດໃນການຈັດຕັ້ງປະຕິບັດຫຼັກສູດການຮຽນ-ການສອນໃນຊັ້ນປະຖົມສຶກສາ ທີ່ເມືອງບາຈຽງຈະເລີນສຸກ ແຂວງຈຳປາສັກ ເຊິ່ງເປັນການສຶກສາແບບປະລິມານ ຫຼື ແບບສຳຫຼວດ (Survey research) ລົງເກັບກຳຂໍ້ມູນຈາກຄະນະຜູ້ອຳນວຍການໂຮງຮຽນ ແລະ ຄູສອນ ໃນໂຮງຮຽນຊັ້ນປະຖົມສຶກສາທີ່ເມືອງບາຈຽງຈະເລີນສຸກ, ແຂວງຈຳປາສັກ ເພື່ອວິເຄາະຫາຄຳຕອບຕາມຈຸດປະສົງການສຶກສາ ໂດຍນຳໃຊ້ສະຖິຕິ Percent, mean, and T-test (Independent), f-test ແລະ ຫາຄ່າຄວາມເຊື່ອໝັ້ນຂອງເຄື່ອງມືໂດຍໃຊ້ສະຖິຕິ Cronbach Alpha reliability coefficient.

**ກຸ່ມຕົວຢ່າງ:**

ກຸ່ມຕົວຢ່າງທີ່ໃຊ້ໃນການວິໄຈຄັ້ງນີ້ໄດ້ແກ່ ບຸກຄະລາກອນໃນໂຮງຮຽນປະຖົມສາມັນສຶກສາ, ເມືອງບາຈຽງຈະເລີນສຸກ, ແຂວງຈຳປາສັກ ໃນສົກສຶກສາ 2022-2023. ການກຳນົດກຸ່ມຕົວຢ່າງໂດຍໃຊ້ຕາຕະລາງຂອງ Yamane,T (1967) ສາມາດໄດ້ກຸ່ມຕົວຢ່າງທັງໝົດແມ່ນ 150 ຄົນ ໃນນັ້ນມີ ຜູ້ອຳນວຍການ 48 ຄົນ, ຄູສອນ 102 ຄົນ.

ນັກຄົ້ນຄວ້າຈະໄດ້ກຳນົດຕົວຢ່າງຂອງຄູໂດຍເຮັດການສຸ່ມແບບແບ່ງຊັ້ນຢ່າງເປັນສັດສ່ວນໂດຍໄດ້ສັດສ່ວນໄດ້ກຸ່ມຕົວຢ່າງເປັນຄູໃນໝວດໂຮງຮຽນຂະໜາດນ້ອຍຈຳນວນ 0 ຄົນ, ໝວດໂຮງຮຽນຂະໜາດກາງ 57 ຄົນ ແລະ ໝວດໂຮງຮຽນຂະໜາດໃຫຍ່ 45 ຄົນ, ລວມທັງໝົດ 102 ຄົນ. ກຸ່ມຕົວຢ່າງຜູ້ອຳນວຍການໂຮງຮຽນໂດຍກຳນົດເອົາ 100% ຂອງຈຳນວນປະຊາກອນທີ່ເປັນຜູ້ອຳນວຍການ ແລະ ໄດ້ກຸ່ມຕົວຢ່າງເປັນຜູ້ອຳນວຍການໃນໝວດໂຮງຮຽນຂະໜາດນ້ອຍຈຳນວນ 0 ຄົນ, ໝວດໂຮງຮຽນຂະໜາດກາງ 36 ຄົນ ແລະ ໝວດໂຮງຮຽນຂະໜາດໃຫຍ່ 12 ຄົນ, ລວມທັງໝົດ 48 ຄົນ.

**ພັດທະນາເຄື່ອງມື**

ເຄື່ອງມືທີ່ໃຊ້ໃນການເກັບຮວບຮວມຂໍ້ມູນການວິໄຈຄັ້ງນີ້ ເປັນແບບສອບຖາມ (Questionnaire) ເຊິ່ງແບບສອບຖາມດັ່ງກ່າວນັກຄົ້ນຄວ້າໄດ້ທົບທວນເອກກະສານທີ່ກ່ຽວຂ້ອງປະສົມປະສານ ໂດຍອີງໃສ່ຮູບແບບຂອງທ່ານ **Hallinger (2011)** ແບ່ງອອກເປັນ 4 ພາກສ່ວນສຳຄັນດັ່ງນີ້:

ພາກ I: ຂໍ້ມູນສ່ວນຕົວ (ເປັນຄຳຖາມເລືອກຕອບ 7 ຂໍ້).

ພາກ II: ສະພາບການຈັດຕັ້ງການຮຽນ-ການສອນຊັ້ນປະຖົມສຶກສາ ພາຍໃນເມືອງບາຈຽງຈະເລີນສຸກ(ເປັນຄຳຖາມເລືອກຕອບ 14 ຂໍ້).

ພາກ III: ຄວາມສາມາດດ້ານຈັດການຕັ້ງປະຕິບັດຫຼັກສູດການຮຽນ-ການສອນຂອງໂຮງຮຽນປະຖົມ (ເປັນຄຳຖາມ 5 ລະດັບຄວາມຄິດເຫັນ 44 ຂໍ້).

ພາກ IV: ຄວາມຄິດເຫັນເພື່ອປັບປຸງຂີດຄວາມສາດໃນການຈັດຕັ້ງປະຕິບັດຫຼັກສູດການຮຽນ-ການສອນໃນໂຮງຮຽນປະຖົມສຶກສາ ພາຍໃນເມືອງບາຈຽງຈະເລີນສຸກ ໃຫ້ໄດ້ຮັບການປັບປຸງດີຂຶ້ນໃນອະ ນາຄົດ (ເປັນຄຳຖາມ 5

ລະດັບຄວາມຄິດເຫັນ 7 ຂໍ້ ແລະ ຄຳຖາມເປີດ 1 ຂໍ້).

**ການວິເຄາະຂໍ້ມູນ.**

ຜູ້ວິໄຈໄດ້ກວດສອບຄວາມຖືກຕ້ອງຂອງແບບສອບຖາມ ແລະ ປະມວນຜົນຂໍ້ມູນ ໂດຍໃຊ້ໂປຣແກຣມ ສຳເລັດຮູບ SPSS ຕາມຂັ້ນຕອນດັ່ງນີ້:

1). ວິເຄາະຂໍ້ມູນກ່ຽວກັບສະຖານະພາບສ່ວນຕົວຂອງຜູ້ຕອບແບບສອບຖາມໂດຍການແຈກແຈງຄວາມຖີ່ ແລະ ຫາຄ່າເປີເຊັນ (%).

2). ວິເຄາະຂໍ້ມູນແບບສອບຖາມຄວາມຄິດເຫັນ 5 ລະດັບ ຂອງ Likert Scalesໃນພາກສ່ວນທີ 2 ເພື່ອຫາຄ່າສະເລ່ຍ ($\bar{X}$) ແລະ ຄ່າຜັນປ່ຽນມາດຕະຖານ (S.D) ເພື່ອຕອບຈຸດປະສົງທີ 2.

3). ວິເຄາະຂໍ້ມູນແບບສອບຖາມຄວາມຄິດເຫັນ 5 ລະດັບ ໃນພາກສ່ວນທີ 3 ເພື່ອຫາຄ່າສະເລ່ຍ ($\bar{X}$) ແລະ ຄ່າຜັນປ່ຽນມາດຕະຖານ (S.D). ແລະ ວິເຄາະຄຳຖາມເປີດ 1 ຄຳຖາມ.

4). ປຽບທຽບຄວາມຄິດເຫັນ ຂອງຜູ້ອຳນວຍການ ແລະ ຄູສອນໃນໂຮງຮຽນຊັ້ນປະຖົມ ຕໍ່ກັບຂີດຄວາມສາມາດໃນການຈັດຕັ້ງປະຕິບັດຫຼັດສູດການຮຽນ-ການສອນ ທີ່ອາດຈະສົ່ງຜົນຕໍ່ການຮຽນ ຂອງນັກຮຽນໃນຊັ້ນປະຖົມສຶກສາ ພາຍໃນ ເມືອງບາຈຽງຈະເລີນ, ແຂວງຈຳປາສັກ ໂດຍໃຊ້ສະຖິຕິ (t-test Independent) ເພື່ອປຽບທຽບຄວາມສາມາດການຈັດຕັ້ງປະຕິບັດຫຼັກສູດການຮຽນ-ການສອນໂດຍການຈຳແນກຕາມຂະໜາດໂຮງຮຽນ ແລະ One Way ANOVA(F-test) ປຽບທຽບຄວາມສາມາດການຈັດຕັ້ງປະຕິບັດຫຼັກສູດການຮຽນ-ການສອນໂດຍການຈຳແນກຕາມປະສົບການເຮັດວຽກ ແລະ ໜ້າທີ່ຮັບຜິດຊອບຂອງກຸ່ມຕົວຢ່າງ.

**ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ**

1) ຄິດໄລ່ຂໍ້ມູນສ່ວນຕົວຂອງກຸ່ມຕົວຢ່າງ ແລະ ສະພາບການຈັດຕັ້ງຫຼັກສູດການຮຽນ-ການສອນໃນຊັ້ນປະຖົມ ເພື່ອຕອບຈຸດປະສົງທີ1:

- ຫາຄ່າຄວາມຖີ່ (Frequency)-ເປີເຊັນ (Percentage)

2) ຄິດໄລ່ຄ່າສະເລ່ຍ ຂອງຄຳຖາມ 5 ລະດັບຄວາມຄິດເຫັນ ເພື່ອຕອບຈຸດປະສົງທີ2

- ຄ່າສະເລ່ຍ Mean ($\bar{X}$)
- ຄ່າຜັນປ່ຽນມາດຕະຖານ Standard Deviation (S.D)

3). ສະຖິຕິປຽບທຽບທີແທັດ (t-test Independent) ເພື່ອທົດສອບສົມມຸດຕິຖານລະຫວ່າງສອງກຸ່ມທີ່ມີອິດສະຫຼະຕໍ່ກັນ ແລະ f-test ເພື່ອທົດສອບສົມມຸດຕິຖານລະຫວ່າງສາມກຸ່ມຂຶ້ນໄປ ໃນບັນດາ 6 ສົມມຸດຕິຖານທີ່ຕັ້ງໄວ້ຄື: $H_1$, $H_2$, ແລະ $H_3$,

**5. ຜົນໄດ້ຮັບ**

ສາມາດປະເມີນໄດ້ ສະພາບການຈັດການຮຽນ-ການສອນ ທີ່ໂຮງຮຽນປະຖົມສຶກສາ ພາຍໃນເມືອງ ບາຈຽງຈະເລີນສຸກ, ແຂວງ ຈຳປາສັກ, ຜົນງານວິໄຈນີ້ ເປັນຂໍ້ມູນພື້ນຖານໃນການປັບປຸງແກ້ໄຂ ສະພາບການຈັດການຮຽນ-ການສອນ ທີ່ໂຮງຮຽນປະຖົມສຶກສາ ພາຍໃນເມືອງ ບາຈຽງຈະເລີນສຸກ, ແຂວງ ຈຳປາສັກ, ຄວາມຄິດເຫັນຂອງຜູ້ອຳນວຍການ ແລະ ຄູສອນ ຈະເປັນຂໍ້ມູນອ້າງອີງທີ່ສຳຄັນໃຫ້ຜູ້ອຳນວຍການໂຮງຮຽນປະຖົມສຶກສາ ແລະ ພາກສ່ວນທີ່ກ່ຽວຂ້ອງ ນຳໄປພິຈາລະນາເຂົ້າໃນການປັບປຸງ ແລະ ວາງທິດທາງແຜນການໃນການພັດທະນາຄຸນນະພາບ ການຈັດຕັ້ງການຮຽນ-ການສອນໄດ້ຮັບການປັບປຸງໃຫ້ດີຂຶ້ນໃນອະນາຄົດ ໂດຍສະເພາະແມ່ນ ບັນດາໂຮງຮຽນປະຖົມສຶກສາ ພາຍໃນເມືອງ ບາຈຽງຈະເລີນສຸກ, ແຂວງຈຳປາສັກ ແລະ ນອກຈາກນີ້, ຂໍ້ມູນຜົນການສຶກສາດັ່ງກ່າວ ຍັງຈະເປັນຂໍ້ມູນອ້າງອີງທາງ

ວິຊາການ ໃຫ້ແກ່ນັກຄົ້ນຄວ້າ, ນັກສຶກສາ ແລະ ຜູ້ສົນໃຈທົ່ວໄປໄດ້ຮັບຮູ້ຢ່າງທົ່ວເຖິງ.

**6. ວິພາກຜົນ**

"ຫຼັກສູດ ແມ່ນການສະແດງໃຫ້ເຫັນໂຄງສ້າງຂອງແຕ່ລະວິຊາ ນັບແຕ່ຊື່ຂອງລາຍວິຊາ, ການກຳນົດເວລາປະຕິບັດ, ການວາງຈຸດປະສົງ, ການກຳນົດເນື້ອໃນຂອງວິຊາຮຽນຕະຫຼອດຮອດຮູບການນຳໃຊ້ອື່ນໆ". ຄຳວ່າຫຼັກສູດມີຄວາມໝາຍສຳລັບການສຶກສາ ແລະ ເຂົ້າກັນວ່າ "ຫຼັກສູດແມ່ນເຄົ້າໂຄງສ້າງທົ່ວໄປຂອງລາຍວິຊາທີ່ໄດ້ຈັດໄວ້ຢ່າງເປັນລະບົບ, ແມ່ນການກຳນົດລາຍວິຊາທີ່ຕ້ອງສອນ ຕາມການກຳນົດຂອງໂຄງການສຶກສາ ເພື່ອໃຫ້ຜູ້ຮຽນໄດ້ສຶກສາຈົບຕາມຄວາມຕ້ອງການໃນລາຍວິຊາຕ່າງໆ". (ກະຊວງສຶກສາທິການ ແລະ ກິລາ, ກົມສ້າງຄູ, ສູນພັດທະນາຄູ , 2008). ສຳລັບຫຼັກສູດແຫ່ງຊາດ ຫຼັກສູດແຫ່ງຊາດຂອງການສຶກສາກ່ອນໄວຮຽນ, ປະຖົມສຶກສາ, ມັດທະຍົມສຶກສາຕອນຕົ້ນ ແລະ ມັດທະຍົມສຶກສາຕອນປາຍ. (ກະຊວງສຶກສາທິການ ແລະ ກິລາ, ກົມຈັດຕັ້ງ ແລະ ພະນັກງານ , 2020). ນັກສຶກສາສາຂາຫຼັກສູດ ແລະ ການສອນ ຄະນະສຶກສາສາດມະຫາວິທະຍາໄລແຫ່ງຊາດ ໄດ້ໃຫ້ຄວາມໝາຍໃນແນວຄິດຂອງຫຼັກສູດນີ້ຄື: ແຜນການຈັດການຮຽນ-ການສອນທີ່ມີອົງປະກອບຄື ຈຸດປະສົງ, ເນື້ອໃນ, ວິທີການຮຽນ-ການສອນ, ຊົ່ວໂມງຮຽນ, ໄລຍະເວລາຮຽນ ແລະ ການປະເມີນຜົນ (ສາຍສະໝອນ ປຣະສອນໄຊ ແລະ ບຸນຊູໄຊຍະສອນ, 2017 ). ສະນັ້ນ, ການຈັດຕັ້ງຫຼັກສູດການຮຽນ-ການສອນແມ່ນໝາກເປັນຂະບວນການທາງການສຶກສາທີ່ມີຄວາມຫຼາກຫຼາຍອົງປະກອບ ແລະ ມີເປົ້າໝາຍກດງວຄືການສ້າງຄົນໃຫ້ກາຍເປັນມີຄວາມຮູ້, ຄວາມສາມາດ, ຄຸນສົມບັດສົນທຳປະຕິບັດ ພ້ອມນຳເອົາຄວາມ ແລະ ປະສົບການທີ່ໄດ້ສຶກສາຮຽນຮູ້ໄປຜັນຂະຫຍາຍນຳໃຊ້ເຂົ້າໃນການດຳລົງຊີວິດ, ການສຶກສາ ແລະ ການພັດທະນາເສດຖະກິດ-ສັງຄົມໃຫ້ຈະເລີນຮັ່ງມີ. ສ່ວນສຳລັບຫຼັກສູດປະຖົມແມ່ນດຳເນີນການຮຽນ-ການສອນເພື່ອພັດທະນາເດັກ, ປູພື້ນຖານທາງການສຶກສາໃຫ້ແກ່ເດັກມີຄວາມຮູ້, ມີຄຸນສົມບັດ, ກິລິຍາມາລະຍາດ, ຈະເລີນເຕີບໂຕທາງສະຕິປັນຍາ ແລະ ຮ່າງກາຍທັງສາມາດອ່ານ, ຂຽນ ແລະ ຄິດໄລ່ເລກພື້ນຖານໄດ້ ຄຽງຄູ່ກັບການຈັດຕັ້ງປະຕິບັດຫຼັກສູດການຮຽນ-ການສອນເຊິ່ງຕິດພັນກັບຂີດຄວາມສາມາດໃນການຈັດຕັ້ງການຮຽນ-ການສອນ ຂອງໂຮງຮຽນ ທີ່ຈຳເປັນຕ້ອງໄດ້ພັດທະນາຕົນເອງສ້າງຂີດຄວາມສາມາດໃນດ້ານຕ່າງໆໃຫ້ກາຍເປັນໂຮງຮຽນທີ່ມີຄຸນນະພາບ ແລະ ມີຜົນສຳເລັດສູງ. (Bain et al., 2011) ຄວາມສາມາດດ້ານການຈັດຕັ້ງປະຕິບັດຫຼັກສູດການສອນແມ່ນຈະອ້າງອີງເຖິງອົງປະກອບທີ່ສຳຄັນທາງດ້ານປະສິດທິພາບການສອນ, ຄຸນນະພາບການຮຽນ ແລະ ການພັດທະນາໂຮງຮຽນ ແລະ (Hallinger's Model, 2011) ໄດ້ກຳນົດອົງປະກອບຂອງຄວາມສາມາດດ້ານການຈັດຕັ້ງປະຕິບັດຫຼັກສູດການຮຽນ-ການສອນ ແບ່ງອອກເປັນ 6 ດ້ານສຳຄັນເຊິ່ງຜົນການສຶກສາຄັ້ງນີ້ ສາມາດຫາຂໍ້ສະຫຼູບໄດ້ດັ່ງລາຍລະອຽດຕ່າງໆລຸ່ມນີ້:

ຕໍ່ກັບສະພາບການຈັດຕັ້ງການຮຽນ-ການສອນໃນຊັ້ນປະຖົມສຶກສາ ພາຍໃນເມືອງບາຈຽງຈະເລີນສຸກແຂວງ ຈຳປາສັກ ພົບວ່າ: ຈຳນວນຊົ່ວໂມງສອນສ່ວນໃຫຍ່ຂອງກຸ່ມຕົວຢ່າງແມ່ນ 20 ຊົ່ວໂມງຂຶ້ນໄປ ແລະສອນລະຫວ່າງ 4-10 ຊົ່ວໂມງຕໍ່ອາທິດ, ສຳລັບການສອນພິເສດບຳລຸງ ເພື່ອສົ່ງເສີມຄວາມຮູ້ໃຫ້ແກ່ນັກຮຽນຂອງຄະນະຜູ້ອຳນວຍການ ແລະ ຄູ-ອາຈານທີ່ສອນໃນຊັ້ນປະຖົມແມ່ນໄດ້ປະຕິບັດບາງຄັ້ງຄາວເປັນສ່ວນໃຫຍ່, ສຳລັບການປະຕິບັດຫຼັກສູດດ້ານປະຕິບັດຕົວຈິງແມ່ນໄດ້ປະຕິບັດຕົວຈິງຫຼາຍ ແຕ່ສຳລັບທັດສະນະສຶກສາແມ່ນບໍ່ໄດ້ປະຕິບັດເລີຍ. ຕໍ່ຜົນຂໍ້ມູນກ່ຽວກັບ ຫ້ອງຮຽນ ແລະອຸປະກອນຮັບໃຊ້ການຮຽນ-ການສອນ ຄວາມຄິດເຫັນຂອງກຸ່ມຕົວຢ່າງສ່ວນໃຫຍ່ແມ່ນບໍ່ພຽງພໍໃນການຈັດຕັ້ງ

ປະຕິບັດຫຼັກສູດ. ສະພາບແວດລ້ອມໂຮງຮຽນມີຄວາມເໝາະສົມໃນການຮຽນຮູ້ສ່ວນໃຫຍ່ ແມ່ນຢູ່ໃນລະດັບເໝາະສົມປານກາງ ແລະ ສຳລັບດ້ານວິຊາທີ່ທີ່ຄູສອນສ່ວນໃຫຍ່ແມ່ນ ວິຊາລວມຄື: ພາສາລາວ, ຄະນິດສາດ, ໂລກອ້ອມຕົວ ແລະ ອື່ນໆ. ສຳລັບຄວາມສາມາດດ້ານການສະໜອງແຫຼ່ງງົບປະມານໃຊ້ເຂົ້າໃນການຈັດຕັ້ງປະຕິບັດຫຼັກສູດ ໃນຊັ້ນປະຖົມພາຍໃນເມືອງບາຈຽງຈະເລີນສຸກ ພົບວ່າ: ຄູໄດ້ຮັບງົບປະມານພຽງພໍເຂົ້າໃນການເຮັດກິດຈະກຳການຮຽນ-ການສອນ, ສາມາດຕອບສະໜອງງົບປະມານໃຫ້ຄູໃນເມື່ອຍາມຈຳເປັນໃຊ້ເຂົ້າໃນການພັດທະນາການສອນ, ສາມາດຕອບງົບປະມານໃນການຍົກລະດັບການສຶກສາວິຊາສະເພາະຂອງຄູ, ມີງົບປະມານສະເພາະການພັດທະນາວິຊາການ ແລະ ການສ້າງນະວັດຕະກຳການສອນ ແລະ ຄູສາມາດເຂົ້າເຖິງງົບປະມານເພື່ອຝຶກທັກສະການສອນ. ແຕ່ວ່າ ສະຖາບັນຄອບຄົວ ແລະ ຊຸມຊົນປະກອບສ່ວນງົບປະມານໃນການພັດທະນາວຽກງານການສຶກສາໃຫ້ແກ່ໂຮງຮຽນ ແມ່ນຍັງມີຂີດຈຳກັດ.

**7. ສະຫຼຸບຜົນ**

ການຄົ້ນຄວ້າຄັ້ງນີ້ ແມ່ນດຳເນີນການພາຍໃຕ້ຫົວຂໍ້ "ຄວາມສາມາດໃນການຈັດຕັ້ງປະຕິບັດຫຼັກສູດການຮຽນ-ການສອນໃນຊັ້ນປະຖົມສຶກສາ ທີ່ ເມືອງບາຈຽງຈະເລີນສຸກ ແຂວງຈຳປາສັກ" ເຊິ່ງມີຈຸດປະສົງ ເພື່ອສຶກສາສະພາບການຈັດຕັ້ງປະຕິບັດຫຼັກສູດການຮຽນ-ການສອນ ທີ່ໂຮງຮຽນປະຖົມສາສຶກສາ ພາຍໃນເມືອງ ບາຈຽງຈະເລີນສຸກ ແຂວງ ຈຳປາສັກ, ເພື່ອປຽບທຽບຄວາມຄິດເຫັນຂອງຄະນະຜູ້ອຳນວຍການ ແລະ ຄູສອນ ຕໍ່ກັບຄວາມສາມາດໃນການຈັດຕັ້ງປະຕິບັດຫຼັກສູດການຮຽນ-ການສອນ ທີ່ສົ່ງຜົນຕໍ່ການຮຽນຂອງນັກຮຽນ ໃນຊັ້ນປະຖົມສຶກສາ ໂດຍການຈຳແນກຕາມ ຂະໜາດຂອງໂຮງຮຽນ, ປະສົບການເຮັດວຽກ ແລະ ໜ້າທີ່ຮັບຜິດຊອບ ແລະ ສຶກສາຄວາມຄິດເຫັນຂອງຄະນະຜູ້ອຳນວຍການ ແລະ ຄູສອນຊັ້ນປະຖົມສຶກສາຕໍ່ແນວທາງປັບປຸງແກ້ໄຂບັນ ຫາໃນການຈັດຕັ້ງການຮຽນ-ການສອນໃຫ້ດີຂຶ້ນໃນອະນາຄົດ. ການສຶກສາຄັ້ງນີ້ເປັນການສຶກສາແບບປະລິມານ ໂດຍຮູບແບບການສຳຫຼວດ (Survey Research). ປະຊາກອນທີ່ໃຊ້ໃນການວິໄຈຄັ້ງນີ້ໄດ້ແກ່ ບຸກຄະລາກອນໃນໂຮງຮຽນປະຖົມສຶກສາ, ເມືອງບາຈຽງຈະເລີນສຸກ, ແຂວງຈຳປາສັກ ໃນສົກຮຽນ 2022 – 2023, ຈຳແນກເປັນຜູ້ອຳນວຍການຈຳນວນ 48 ຄົນ, ຄູສອນຈຳນວນ 189 ຄົນ, ລວມທັງໝົດ 237 ຄົນ ເຊິ່ງໄດ້ກຳນົດກຸ່ມຕົວຢ່າງໂດຍໃຊ້ຕາຕະລາງຂອງ Taro Yamane ອ້າງເຖິງໃນ (ພັດທຣາພອນ ເກດສັງ 2005:75) ໄດ້ມາຈາກການສຸ່ມຕົວຢ່າງແບບແບ່ງຊັ້ນ ( Stratified Random Sampling). ໂດຍໃຊ້ຂະໜາດຂອງໂຮງຮຽນ ແລະ ຕຳແໜ່ງເປັນຊັ້ນ ເຊິ່ງໄດ້ກຸ່ມຕົວຢ່າງທັງໝົດແມ່ນ 150 ຄົນ ໃນນັ້ນມີ ຜູ້ອຳນວຍການ 48 ຄົນ ແລະ ຄູສອນ 102 ຄົນ. ເຄື່ອງມືທີ່ໃຊ້ໃນການເກັບຮວບຮວມຂໍ້ມູນການວິໄຈຄັ້ງນີ້ ເປັນແບບສອບຖາມ (Questionnaire) ເຊິ່ງແບບສອບຖາມດັ່ງກ່າວນັກຄົ້ນຄວ້າໄດ້ທົບທວນເອກະສານທີ່ກ່ຽວຂ້ອງປະສົມປະສານ ໂດຍພັດທະນາເຄື່ອງມືຈາກແບບຂອງທ່ານ Hallinger (2011). ນຳເຄື່ອງມືໄປທົດລອງໃຊ້ (Pilot) ກັບປະຊາກອນທີ່ບໍ່ແມ່ນກຸ່ມຕົວຢ່າງຈຳນວນ 30 ຄົນ ເພື່ອຫາຄຸນນະພາບເຄື່ອງມື ( Cronbach Alpha Reliability ) ຜົນການວິເຄາະພົບວ່າ: 0.816 ຫາ 0.946 ສຳລັບການປະມວນຜົນຂໍ້ມູນ ໂດຍໃຊ້ໂປຣແກຣມ ສຳເລັດຮູບ SPSS ເຊິ່ງວິເຄາະ ຄ່າຄວາມຖີ່, ຫາຄ່າເປີເຊັນ (%), ຄ່າສະເລ່ຍ ($\bar{X}$), ຄ່າຜົນປ່ຽນມາດຕະຖານ (S.D), ໃຊ້ສະຖິຕິ (t-test Independent) ແລະ f-test ເພື່ອປຽບທຽບຄວາມຄິດເຫັນຂອງກຸ່ມຕົວຢ່າງ. ສຳລັບຜົນການວິເຄາະຈາກການຄົ້ນຄວ້າຄັ້ງນີ້ແມ່ນສາມາດສະຫຼຸບຜົນດັ່ງນີ້:

ເພື່ອສະຫຼຸບຜົນການຄົ້ນຄວ້າຈາກຈຸດປະສົງທີ 1; ສະພາບການຈັດຕັ້ງການຮຽນ-ການສອນ ໃນຊັ້ນປະຖົມ ພາຍໃນເມືອງ ບາຈຽງ ແຂວງ ຈຳປາສັກ ຜົນການສຶກສາ ພົບວ່າ: ຈຳນວນຊົ່ວໂມງສອນສ່ວນໃຫຍ່ຂອງກຸ່ມຕົວຢ່າງ ແມ່ນ 20 ຊົ່ວໂມງຂຶ້ນໄປ ເຊິ່ງກວມເອົາຊັດສ່ວນເຖິງ 84%, ສຳລັບການສອນພິເສດບຳລຸງ ເພື່ອສົ່ງເສີມຄວາມຮູ້ໃຫ້ແກ່ນັກຮຽນ ແມ່ນ ໄດ້ປະຕິບັດບາງຄັ້ງຄາວເຊິ່ງກວມເອົາຊັດສ່ວນເຖິງ 48%, ການສອນເນັ້ນການປະຕິບັດຕົວຈິງ ສ່ວນໃຫຍ່ຂອງກຸ່ມຕົວຢ່າງແມ່ນປະຕິບັດຕົວຈິງຫຼາຍ ເຊິ່ງກວມເອົາຊັດສ່ວນເຖິງ 65.3%, ຫ້ອງຮຽນ ແລະ ອຸປະກອນຮັບໃຊ້ການຮຽນ-ການສອນ ສ່ວນໃຫຍ່ຂອງກຸ່ມຕົວຢ່າງແມ່ນບໍ່ພຽງພໍ ເຊິ່ງກວມເອົາຊັດສ່ວນເຖິງ 66.7%, ຕໍ່ສະພາບແວດລ້ອມໂຮງຮຽນມີຄວາມເໝາະສົມໃນການຮຽນຮູ້ຢູ່ໃນລະດັບຄວາມເໝາະສົມ ປານກາງ ເຊິ່ງກວມເອົາຊັດສ່ວນເຖິງ 54.7%, ຄູ-ອາຈານທີ່ສອນໃນຊັ້ນປະຖົມສຶກສາແມ່ນສອນລວມທຸກວິຊາຄື: ວິຊາພາສາລາວ, ວິຊາຄະນິດສາດ, ວິຊາໂລກອ້ອມຕົວ ກວມເອົາຊັດສ່ວນເຖິງ 84%, ບັນຫາທ້າທ້າທາຍໃນການຈັດການຮຽນ-ການສອນ ສ່ວນໃຫຍ່ຂອງກຸ່ມຕົວຢ່າງແມ່ນດ້ານນັກຮຽນ ເຊິ່ງກວມເອົາຊັດສ່ວນເຖິງ 59.3%, ຈຳນວນຊັດສ່ວນຮອງລົງມາແມ່ນບັນຫາດ້ານສິ່ງອຳນວຍຄວາມສະດວກ, ທັດສະນະຕໍ່ຜົນສຳເລັດໃນການຈັດຕັ້ງການຮຽນ-ການສອນແມ່ນມີຜົນສຳເລັດໃນລະດັບປານກາງ, ຄວາມຄິດເຫັນວ່າການສອນມີຜົນສຳເລັດ ແມ່ນມີຜົນສຳເລັດປານກາງ ເຊິ່ງກວມເອົາຊັດສ່ວນເຖິງ 58% ແລະ ຈຳນວນຊັດສ່ວນຮອງລົງມາແມ່ນ ການສອນມີຜົນສຳເລັດຫຼາຍ ເຊິ່ງກວມເອົາ 42%. ກິດຈະກຳສົ່ງເສີມການຮຽນຮູ້ເຂົ້າໃນການປະຕິບັດຫຼັກສູດການຮຽນ-ການສອນແມ່ນມີຢູ່ໃນລະດັບປານກາງ ເຊິ່ງກວມເອົາຊັດສ່ວນເຖິງ 58%, ສຳລັບການປະຕິບັດຫຼັກສູດການຮຽນ-ການສອນສາມາດປະຕິບັດພຽງພໍຕາມ 3 ລັກສະນະ 5 ຫຼັກມູນຂອງການສຶກສາ ແມ່ນປະຕິບັດໄດ້ຫຼາຍ ເຊິ່ງກວມເອົາຊັດສ່ວນເຖິງ 51.3% ແລະຮອງລົງມາແມ່ນປະຕິບັດໄດ້ປານກາງ ເຊິ່ງກວມເອົາ 46.7%. ຕໍ່ກັບການນຳໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານເຂົ້າໃນການປະຕິບັດຫຼັກສູດການຮຽນ-ການສອນ ສ່ວນໃຫຍ່ຂອງກຸ່ມຕົວຢ່າງແມ່ນ ໃຊ້ປານກາງ ເຊິ່ງກວມເອົາຊັດສ່ວນເຖິງ 53.3%, ຈຳນວນຊັດສ່ວນຮອງລົງມາແມ່ນໃຊ້ໜ້ອຍ ເຊິ່ງກວມເອົາຊັດສ່ວນ 28% ແລະ ສຳລັບບັນຫາທີ່ທ້າທາຍໃນການປະຕິບັດຫຼັກສູດການຮຽນ-ການສອນ ສ່ວນໃຫຍ່ຂອງກຸ່ມຕົວຢ່າງແມ່ນດ້ານງົບປະມານ ເຊິ່ງກວມເອົາຊັດສ່ວນເຖິງ 48%, ຈຳນວນຊັດສ່ວນຮອງລົງມາແມ່ນດ້ານອຸປະກອນ ແລະ ພື້ນຖານໂຄງລ່າງ ເຊິ່ງກວມເອົາຊັດສ່ວນ 29.3%, ດ້ານນັກຮຽນ ເຊິ່ງກວມເອົາຊັດສ່ວນ 17.3% ແລະ ໜ້ອຍກວ່າໝູ່ແມ່ນດ້ານຄູສອນ ເຊິ່ງກວມເອົາຊັດສ່ວນພຽງແຕ່ 5.3%.

ເພື່ອສະຫຼຸບຜົນການຄົ້ນຄວ້າຈາກຈຸດປະສົງທີ 2; ເພື່ອປຽບທຽບຄວາມຄິດເຫັນຂອງຄະນະຜູ້ອຳນວຍການ ແລະ ຄູສອນຕໍ່ກັບຄວາມສາມາດໃນການຈັດຕັ້ງປະຕິບັດຫຼັກສູດການຮຽນ-ການສອນ ທີ່ສົ່ງຜົນຕໍ່ການຮຽນຂອງນັກຮຽນ ໃນຊັ້ນປະຖົມສາມັນສຶກສາ ໂດຍການຈຳແນກຕາມ ຂະໜາດຂອງໂຮງຮຽນ, ປະສົບການເຮັດວຽກ ແລະ ໜ້າທີ່ຮັບຜິດຊອບ; ຈາກຜົນການສຶກສາສາມາດສະຫຼຸບໄດ້ວ່າ: ຜົນການຄົ້ນຄວ້າດັ່ງກ່າວແມ່ນສອດຄ່ອງກັບສົມມຸດຕິຖານທີ່ກຳນົດໄວ້ເກືອບທັງໝົດ; ໝາຍຄວາມວ່າ ຄວາມຄິດເຫັນຂອງຄະນະຜູ້ອຳນວຍການ ແລະ ຄູສອນ ຕໍ່ ດ້ານການຄຸ້ມຄອງບໍລິຫານຫຼັກສູດການຮຽນ-ການສອນ, ດ້ານການສອນຂອງຄູ, ດ້ານອຸປກອນການຮຽນ-ການສອນ, ດ້ານສະພາບແວດລ້ອມ, ດ້ານນັກຮຽນ ແລະ ດ້ານງົບປະມານ ໂດຍການຈຳແນກຕາມຂະໜາດຂອງໂຮງຮຽນ, ປະສົບການເຮັດວຽກ ແລະ ໜ້າທີ່ຮັບຜິດຊອບແມ່ນບໍ່ມີຄວາມແຕກຕ່າງທາງສະຖິຕິຢ່າງມີໄລຍະສຳຄັນ ໃນລະດັບ 0.01 0.05; ໝາຍຄວ່າ

ຄວາມຄິດຂອງກຸ່ມຕົວຢ່າງຄະນະຜູ້ອຳນວຍ ແລະ ຄູສອນແມ່ນມີຄວາມຄິດເຫັນບໍ່ແຕກຕ່າງກັນ. ຍົກເວັ້ນດ້ານງົບປະມານ ແມ່ນມີຄວາມຄິດເຫັນທີ່ແຕກແຕກຕ່າງກັນຢ່າງມີໄລຍະສຳຄັນທາງສະຖິຕິໃນລະດັບ 0.05; ໝາຍຄວາມວ່າ ຄະນະຜູ້ອຳນວຍການ ແລະ ຄູສອນມີຄວາມຄິດເຫັນຕໍ່ຂີດຄວາມສາມາດດ້ານການບໍລິຫານງົບປະມານ ແມ່ນມີຄວາມແຕກ ຕ່າງກັນ.

ເພື່ອສະຫຼຸບຜົນການຄົ້ນຄວ້າຈາກຈຸດປະສົງທີ 3; ສຶກສາຄວາມຄິດເຫັນຂອງຄະນະຜູ້ອຳນວຍການ ແລະ ຄູສອນຊັ້ນປະຖົມສຶກສາຕໍ່ແນວທາງປັບປຸງແກ້ໄຂບັນ ຫາໃນການຈັດຕັ້ງການຮຽນ-ການສອນໃຫ້ດີຂຶ້ນໃນອະນາຄົດ;ຜົນການວິເຄາະໄດ້ພົບວ່າ: ຜົນລວມຂອງຄ່າສະເລ່ຍ ($\bar{X}$=4,59), (S.D=0.48) ເຊິ່ງຢູ່ໃນລະດັບຄວາມຄິດເຫັນ 'ຫຼາຍທີ່ສຸດ'; ເປັນຕົ້ນກຸ່ມຕົວຢ່າງໄດ້ກ່າວວ່າ ທາງໂຮງຮຽນ ຄວນສືບຕໍ່ປັບປຸງຂີດຄວາມສາມາດໃນການຈັດຕັ້ງການຮຽນ-ການສອນ, ຕອບສະໜອງປະລິມານ ແລະ ຄຸນນະພາບອຸປະກອນຮັບໃຊ້ເຂົ້າໃນການຈັດຕັ້ງຫຼັກສູດການຮຽນ-ການສອນ, ປັບປຸງຂີດຄວາມສາມາດ ໃນການຈັດຕັ້ງປະຕິບັດຫຼັກສູດການຮຽນ-ການສອນ, ປັບປຸງດ້ານຄຸນນະພາບການສອນຂອງຄູສອນ, ປັບປຸງດ້ານຄວາມພ້ອມຂອງນັກຮຽນ ແລະ ປັບປຸງຄວາມສາມາດການຄຸ້ມຄອງບໍລິຫານຫຼັກສູດການຮຽນ-ການສອນ ແລະ ປັບປຸງດ້ານສະພາບແວດ ແລະ ພື້ນຖານໂຄງລ່າງພາຍໃນໂຮງຮຽນ ແລະ ປັບປຸງດ້ານການຕອບສະໜອງແຫຼ່ງງົບປະມານໃຊ້ເຂົ້າໃນການຈັດຕັ້ງປະຕິບັດຫຼັກສູດ.

## 8. ຄວາມຮູ້ບຸນຄຸນ

ກ່ອນອື່ນຜູ້ຄົ້ນຄວ້າຂໍຕິລາຄາສູງ ແລະ ຮູ້ບຸນຄຸນມາຍັງຄູທີ່ປຶກສາ ທ່ານ ປອ. ນາງ ພອນສະຫວັນ ເທບພະສຸລິທອນ ແລະ ຜູ້ຊ່ວຍຄູທີ່ປຶກສາ ທ່ານ ປທ. ບຸນສິງ ສໍແກ້ວມະນີ ແລະ ປທ. ທິບພະວັນ ຂັນທະພອນ ທີ່ອຸທິດສະຕິປັນຍາ, ຄວາມພະຍາຍາມ ແລະ ເວລາອັນມີຄ່າຊ່ວຍແນະນຳເຮັດໃຫ້ການຂຽນວິທະຍານິພົນຂອງຂ້າພະເຈົ້າມີຜົນສຳເລັດສູງ.

ຂໍສະແດງຄວາມຂອບໃຈມາຍັງຄະນະພັກ, ຄະນະນຳ ພ້ອມດ້ວຍຄະນະຮັບຜິດຊອບຫຼັກສູດ ທີ່ຄະນະສຶກສາສາດ, ມະຫາວິທະຍາໄລ ຈຳປາສັກ ທີ່ໄດ້ອຳນວຍຄວາມສະດວກ ແລະ ໃຫ້ໂອກາດຜູ້ຄົ້ນຄວ້າໄດ້ສຶກສາຮຽນຮູ້ໃນຫຼັກສູດປະລິນຍາໂທ ສຶກສາສາດ ສາຂາວິທະຍາສາດການສຶກສາ. ຕະຫຼອດທ່ານຄະນະກຳມະການປ້ອງກັນວິທະຍານິພົນ ທີ່ໄດ້ເສຍສະຫຼະເຫື່ອແຮງສະຕິປັນຍາ ໃຫ້ຄຳແນະນຳ ແລະ ມີຄຳເຫັນຕໍ່ວິທະຍານິພົນຂອງຂ້າພະເຈົ້າໄດ້ຮັບການປັບປຸງ ແລະ ມີຜົນສຳເລັດສູງ.

ຂໍສະແດງຄວາມຮູ້ບຸນຄຸນມາຍັງຄູ-ອາຈານທີ່ສິດສອນ ທີ່ໄດ້ຖ່າຍທອດຄວາມຮູ້ ແລະ ປະສົບການໃນແຕ່ລະວິຊາ ເຮັດໃຫ້ຜູ້ຄົ້ນຄວ້າໄດ້ພັດທະນາແນວຄວາມຄິດ ແລະ ຈິນຕະນາການໃໝ່ ເພື່ອນຳເອົາໄປຜັນຂະຫຍາຍພັດທະນາອົງການຈັດຕັ້ງຜູ້ຄົ້ນຄວ້າໃນອານາຄົດ. ຂໍສະແດງຄວາມຮັກແພງເພື່ອນມິດຮ່ວມຮຸ່ນທີ່ໄດ້ແລກປ່ຽນຮຽນຮູ້ປະສົບການທັງດ້ານວິຊາການ ແລະ ປະສົບການຊີວິດແກ່ຜູ້ຄົ້ນຄວ້າໄດ້ຮຽນຮູ້ຢ່າງເລິກເຊິ່ງ.

ຂໍຖືໂອກາດນີ້ ສະໄດ້ສະແດງຄວາມຮູ້ບຸນຄຸນມາຍັງອົງການຈັດຕັ້ງຂອງຜູ້ຄົ້ນຄວ້າ ຄືຫ້ອງການສຶກສາທິການ ແລະ ກິລາເມືອງບາຈຽງຈະເລີນສຸກ ທີ່ໄດ້ຊຸກຍູ້ສົ່ງເສີມ ແລະ ໃຫ້ໂອກາດຜູ້ຄົ້ນຄວ້າໄດ້ຍົກລະດັບວິຊາສະເພາະຂອງຕົນຈົນໄດ້ຮັບຜົນສຳເລັດສູງ.

ສຸດທ້າຍ, ຜູ້ຄົ້ນຄວ້າຂໍສະແດງຄວາມຮູ້ບຸນຄຸນມາຍັງພໍ່ແມ່, ຄອບຄົວພັນລະຍາ, ລູກ ແລະ ສັງຄົມເພື່ອນມິດຮັກແພງທີ່ໃຫ້ກຳລັງໃຈ ແລະ ໃຫ້ການສະໜັບສະໜູນຂ້າພະເຈົ້າສູ້ຊົນສຶກສາຮ່ຳຮຽນຈົນໄດ້ຮັບຜົນສຳເລັດໃນທຸກບາດກ້າວການສຶກສາຮ່ຳຮຽນໃນຕະຫຼອດສອງປີ ສະນັ້ນ, ຖ້າຫາກຂາດພາກສ່ວນ ແລະ ບຸກຄົນທີ່ສຳຄັນ

ດັ່ງກ່າວມາ ຜູ້ຄົ້ນຄວ້າຄິດວ່າຈະບໍ່ຈົບການສຶກສາຄັ້ງນີ້ຢ່າງແນ່ນອນ.

## 9. ເອກະສານອ້າງອີງ


ກົດໝາຍ ວ່າດ້ວຍການສຶກສາແຫ່ງຊາດ (ສະບັບປັບປຸງ), ນະຄອນຫຼວງວຽງຈັນ, 2016

ກະຊວງສຶກສາທິການ ແລະ ກິລາ, ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ XI, 2020.

ສູນການສຶກສາຮຽນຮ່ວມ, ອຸປະສັກກິດຂວາງການເຂົ້າຮຽນ ແລະ ຍຸດທະວິທີທີ່ເປັນໄປໄດ້ໃນການເພີ່ມ ແລະ ການຮັກສາການເຂົ້າຮຽນຂອງນັກຮຽນຊັ້ນມັດທະຍົມ, ໂຄງການພັດທະນາການສຶກສາຂັ້ນພື້ນຖານ, 2015.

ຍຸດທະສາດ ການພັດທະນາຊັບພະຍາກອນມະນຸດແຫ່ງຊາດ, ນະຄອນຫຼວງວຽງຈັນ, 2016.

ດາວສະຫວັນ ຈັນທະລິເດດ. ສຶກສາສະພາບບັນຫາການບໍລິຫານງານວິຊາການຂອງໂຮງຮຽນມັດທະຍົມສຶກສາ ຕອນຕົ້ນ ສັງກັດພະແນກສຶກສາປະຈຳນະຄອນຫຼວງວຽງຈັນ. ວິທະຍານິພົນ ສາຂາວິຊາບໍລິຫານການສຶກສາ, ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ, 2010.

ບົດສະຫຼຸບ ແລະ ແຜນພັດທະນາການສຶກສາ ແລະ ກິລາ, ພະແນກສຶກສາທິການ ແລະ ກິລາແຂວງຈຳປາສັກ. ຫ້ອງການສຶກສາທິການ ແລະ ກິລາເມືອງບາຈຽງຈະເລີນສຸກ, 2021.

ບົດສະຫຼຸບ ແລະ ແຜນພັດທະນາການສຶກສາ ແລະ ກິລາ, ພະແນກສຶກສາທິການ ແລະ ກິລາແຂວງຈຳປາສັກ. ຫ້ອງການສຶກສາທິການ ແລະ ກິລາເມືອງບາຈຽງຈະເລີນສຸກ, 2020.

ບົດສະຫຼຸບ ແລະ ແຜນພັດທະນາການສຶກສາ ແລະ ກິລາ, ພະແນກສຶກສາທິການ ແລະ ກິລາແຂວງຈຳປາສັກ. ຫ້ອງການສຶກສາທິການ ແລະ ກິລາເມືອງບາຈຽງຈະເລີນສຸກ, 2019.

Adam. M.C (2013). Collective Trust: A Social Indicator of Instructional Capacity. Journal of Education Administration. 363-382.

Bain, A., Walker, A., & Chan, A. (2011). Self-organization and capacity building: Sustaining the change. Journal of Educational Administration, 49(4), 701–719.

Boissiere, M. (2004) Determinants of primary education outcomes in developing countries: Background paper for the evaluation of the world bank's support to primary education.

Bloom, G., & Vitcov, B. (2010). PLCs: A cultural habit built on trust. Leadership, 24–26.

Cohen, D. K., & Ball, D. L. (1999). Instruction, capacity, and improvement. CPRE Research Consortium for Policy Research in Education, University of Pennsylvania.

Corcoran, G., & Goertz, H. (1995). Instructional capacity and high performance schools. Educational Researcher 19(9), 27–31.

Coban, O., Ozdemir, N., & Bellibaş, M. Ş. (2020). Trust in principals, leaders' focus on instruction, teacher collaboration, and teacher self-efficacy: Testing a multilevel mediation model.

Capperucci, D. (2015). Self-evaluation and school improvement: The issemod model to develop the quality of school processes and outcomes. International E-Journal of Advances in Education, 56–69.

Crowther, F. (2011). The parallel leadership pathway: From school improvement to sustained capacity. Corwin.

Hallinger, P., Lee, M., & Ko, J. (2014). Exploring the impact of school principals on teacher professional communities in Hong Kong. Leadership and Policy in Schools, 229–259.

Hanushek, E. A. (2003). The failure of input-based schooling policies. The Economic Journal, 113(485).

Hallinger, P. (2005). Instructional leadership and the school principal: A passing fancy that refuses to fade away. Leadership and Policy in Schools, 4(3), 1–20.

Hovland, M. (2008). GRP to conquer classroom management. The New Teacher. Advocate,18 (1),4-5.

Kulm, G., & Li, Y. (2009) Curriculum research to improve teaching and learning: national and cross-national studies. ZDM Mathematics Education, 41, 709–715.

Long, M. H. (2002). Focus on form in task-based language teaching. In R.D. Lambert &E. Shohamy (Eds.), Language policy and pedagogy: Essay in honor of A. Ronald Walton (pp.177-192). Philadelphia: John Benjamins.

McKinsey, C., & McKinsey, M. M. (2007). How the world's best performing school systems come out on top.

Owan, (2012), Some Cause OF Poor Performance OF Pupil In Primary School Mathematic.

Ralenala, M. F. (2003). Reading behaviour of the first-year physics at the University of the North. Doctoral Thesis: RAU. Johannesburg.

Sunar, S., & Geban, O., (2012). Determining teachers' views on effective teacher qualification, Applied Education Congress, Ankara, 138–139.

Suruga, P. O. (2014). Obstacles to Basic Education Development in Rural Lao PDR - Delayed Enrolment, Grade Repetition and Dropout - . Education Development, Gender, Ethnics, Lao PDR JEL Classification: I20, O15, P20 ,